ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມປຶກສາຫາລືວຽກງານຄຸ້ມຄອງເງິນຕາຕ່າງປະເທດ



ໃນວັນທີ 28 ກໍລະກົດ 2023 ນີ້, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມປຶກສາຫາລືວຽກງານຄຸ້ມຄອງເງິນຕາຕ່າງປະເທດ ຂຶ້ນທີ່ຫ້ອງປະຊຸມຊັ້ນ 4 ທຫລ ໂດຍການເປັນປະທານຂອງ ທ່ານ ເພັດສະຖາພອນ ແກ້ວວົງວິຈິດ ຫົວໜ້າກົມຄຸ້ມຄອງເງິນຕາຕ່າງປະເທດ, ມີບັນດາຄະນະກົມ, ຄະນະພະແນກ, ບັນດາກະຊວງທີ່ກ່ຽວຂ້ອງເຂົ້າຮ່ວມ ພ້ອມທັງວິຊາການພາຍໃນ ທຫລ ທີ່ກ່ຽວຂ້ອງຈຳນວນ 40 ທ່ານເຂົ້າຮ່ວມ.

ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້, ແມ່ນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022. ຄຳສັ່ງຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ເລກທີ 10/ນຍ ລົງວັນທີ 14 ກໍລະກົດ 2023 ແລະ ເຜີຍແຜ່ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການນຳເຂົ້າ-ສົ່ງອອກ ສິນຄ້າ ແລະ ການບໍລິການ ເລກທີ 677/ທຫລ ລົງວັນທີ 24 ກໍລະກົດ 2023 ຂໍ້ຕົກລົງດັ່ງກ່າວໄດ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການໃນການຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ ເພື່ອຊຸກຍູ້ທຸລະກຳການຊຳລະ ແລະ ຮັບຊຳລະຄ່າສິນຄ້າ ແລະ ການບໍລິການກັບຕ່າງປະເທດໃຫ້ຜ່ານລະບົບທະນາຄານ ແນ່ໃສ່ສ້າງຄວາມເຂັ້ມແຂງຖານະຊຳລະກັບຕ່າງປະເທດ ແລະ ຄັງສຳຮອງເງິນຕາຕ່າງປະເທດ ປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບເງິນຕາແຫ່ງຊາດ.




ກອງປະຊຸມດັ່ງກ່າວໄດ້ດໍາເນີນໄປເປັນເວລາເຄິ່ງວັນເຕັມໄປດ້ວຍບັນຍາກາດອັນຟົດຟື້ນ ໂດຍຜູ້ເຂົ້າຮ່ວມໄດ້ແລກປ່ຽນຄໍາຄິດເຫັນ ແລະ ຕັ້ງຄໍາຖາມຕໍ່ການຈັດຕັ້ງປະຕິບັດວຽກງານ ດັ່ງກ່າວໃຫ້ມີປະສິດທິຜົນ.

**ຂ່າວ-ພາບ: ແຂກ ມູນລະໄມ + ສົມພິດ ທໍາມະວົງ**

*ຢູ່ເມືອງລາວໃຊ້ເງິນກີບລາວ*